**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ**

-----=====00000=====-----

**ກະຊວງສຶກສາທິການ**

**ກົມອາຊີວະສຶກສາ ແລະ ການສຶກສາຊັ້ນສູງ** ເລກທີ: 116 /ອສ.2008

ນະຄອນຫຼວງວຽງຈັນ, ວັນທີ : 24/06/08

# ບົດສະຫລຸບ

# ການປະຕິບັດແຜນການພັດທະນາວຽກງານອາຊີວະສຶກສາ ປະຈຳສົກຮຽນ 2007-2008.

**- ອີງຕາມແຜນຂອງກົມອາຊີວະສຶກສາ ແລະ ການສຶກສາຊັ້ນສູງ ສົກປີ 2007-08.**

ສືບຕໍ່ປະຕິບັດແຜນຍຸດທະສາດ ການພັດທະນາເສດຖະກິດສັງຄົມ, ພັດທະນາຊັບພະຍາກອນມະນຸດ ແຕ່ນີ້ເຖິງ ປີ 2020 ເວົ້າລວມ, ເວົ້າສະເພາະແມ່ນ ການຈັດຕັ້ງປະຕິບັດແຜນຍຸດທະສາດການພັດທະນາວຽກງານ ອາຊີວະສຶກສາ ແຕ່ນີ້ ຮອດປີ 2010 ແລະ 2020. ຜ່ານການ ປະຕິບັດວຽກງານຕະຫລອດ 1 ປີ ສາມາດສະຫລຸບ ໄດ້ວຽກງານຕ່າງໆ ໃນສາຍອາຊີວະ ປົ່ນອ້ອມ 3 ແຜນງານ ຂອງກະຊວງສຶກສາທິການ ດັ່ງລຸ່ມນີ້ :

**I ດ້ານສະຖິຕິ .**

1). ໃນສົກຮຽນ 2007-08 ນີ້ ມີໂຮງຮຽນອາຊີວະສຶກສາ ທີ່ຂຶ້ນກັບ ກົມອາຊີວະສຶກກສາ ແລະ ການສຶກສາຊັ້ນສູງ ທັງໝົດຈຳນວນ 21 ແຫ່ງ ( ເພີ່ມຂຶ້ນ 02 ແຫ່ງ ) ທີ່ດຳເນີນການຮຽນ-ການສອນ ໃນຫລັກສູດໄລຍະສັ້ນແຕ່ 01 ເດືອນ ຂຶ້ນໄປ ແລະ ຫລັກສູດ ໄລຍະຍາວ ຊັ້ນຕົ້ນ (ລະບົບ 8+3), ຊັ້ນກາງ (ລະບົບ11+2ແລະ11+3), ຊັ້ນສູງ (11+3) ແລະ ຊັ້ນສູງຕໍ່ເນື່ອງ 1 ປີ 6 ເດືອນ ( ລາຍລະອຽດຂອງສາຂາວິຊາ ທີ່ສິດສອນໃນແຕ່ລະ ລະດັບຕາມເອກະສານຄັດຕິດ 1 ). ນອກຈາກນັ້ນຍັງມີ ສູນ 02 ສູນຄື : ສູນພັດທະນາອາຊີວະສຶກສາ ແລະ ສູນພັດທະນາ ຜູ້ປະກອບກິດຈະການ ລາວ-ອິນເດຍ.

**2. ສະຖິຕິພະນັກງານ, ຄູ-ອາຈານ ໃນສົກຮຽນ 2007-08.**

- ໃນສົກຮຽນ 2007-08 ນີ້ ມີພະນັກງານ, ຄູອາຈານໃນ ສູນ ແລະ ໂຮງຮຽນ ອາຊີວະສຶກສາ ທີ່ຂຶ້ນກັບກົມອາຊີວະສຶກສາ ຈຳນວນ 1,476 ຄົນ, ຍິງ 450 ຄົນ. ຄູສອນຕົວຈິງ 1,256 ຄົນ, ຍິງ 367 ຄົນ, ພະນັກງານບໍລິຫານ 189 ຄົນ, ຍິງ 76 ຄົນ, ຮັບເຂົ້າໃໝ່ 90 ຄົນ (ລາຍລະອຽດເຊັນເບິ່ງຕາຕະລາງ 1 ໃນ ເອກະສານ ຄັດຕິດ 2 ).
- ໃນສົກຮຽນ 2007-08 ນີ້ ມີພະນັກງານ,ຄູອາຈານ ໃນ ຂະແໜງ ອາຊີວະສຶກສາ ຂຶ້ນກັບກົມອອກບຳນານ 02 ຄົນ, ຍິງ 0 ຄົນ, ປະລະໜ້າທີ່ 0 ຄົນ, ຍິງ 0 ຄົນ ແລະ ເສຍຊີວິດ 02 ຄົນ.

3. <u>ສະຖິຕິ ນັກຮຽນ ຢູ່ໃນໂຮງຮຽນ ອາຊີວະສຶກສາ ສົກຮຽນ 2007-08.</u>

ໃນສົກຮຽນ 2007-08 ຂະແໜງອາຊີວະສຶກສາມີນັກຮຽນທັງໝົດ ຈຳນວນ 13690 ຄົນ, ຍິງ 5060 ຄົນ ດັ່ງລາຍລະອຽດລຸ່ມນີ້ :

- ນັກຮຽນອາຊີວະສຶກສາລະດັບຊັ້ນຕົ້ນ 404 ຄົນ, ຍິງ 126 ຄົນ. ໃນນັ້ນມີນັກຮຽນ ຮຽນສາຍພິເສດ 13 ຄົນ, ຍິງ 1 ຄົນ ແລະ ມີນັກຮຽນ ປີທີ (1) 28 ຄົນ ຍິງ 14 ຄົນ.
- ນັກຮຽນອາຊີວະສຶກສາລະດັບ ຊັ້ນກາງ 9,213 ຄົນ, ຍິງ 2,977 ຄົນ. ໃນນັ້ນ ມີນັກຮຽນສາຍພິເສດ 4500 ຄົນ, ຍິງ 1359 ຄົນ ແລະ ມີນັກຮຽນປີທີ (1) 3133 ຄົນ ຍິງ 859 ຄົນ.
- ນັກຮຽນ ອາຊີວະສຶກສາ ຊັ້ນສູງ ຈຳນວນ 7,532 ຄົນ, ຍິງ 3,192 ຄົນ , ສາຍພິເສດ ຈຳນວນ 5,602 ຍິງ 2,629 ຄົນ, ນັກຮຽນປີ 1 ຈຳນວນ 4,319 ຄົນ, ຍິງ 1,785 ຄົນ.
- ໃນສົກຮຽນ 2007-08 ມີນັກຮຽນ ຄູອາຊີວະສຶກສາຊັ້ນສູງ ຈຳນວນ 106 ຄົນ, ຍິງ 32 ຄົນ ປີທີ (1) ຈຳນວນ ທັງໝົດ 49 ຄົນ, ຍິງ 12 ຄົນ.

ໃນສົກຮຽນ 2007-08 ມີນັກຮຽນຈົບໃນ ລະດັບວິຊາຊີບ ຊັ້ນຕົ້ນ ຈຳນວນ 515 ຄົນ ; ຍິງ 208 ຄົນ, ລະດັບ ເຕັກນິກຊັ້ນກາງ ຈຳນວນ 4,395 ຄົນ, ຍິງ 1,590 ຄົນ, ຄູອາຊີວະສຶກສາຊັ້ນສູງ ຈຳນວນ 62 ຄົນ, ຍິງ 29 ຄົນ

## II ສະພາບທົ່ວໄປ :

1. ສັງເກດຕີລາຄາດ້ານດີ.

- ພະນັກງານ, ຄູ-ອາຈານ ສ່ວນໃຫຍ່ແມ່ນມີຄວາມຫ້າວຫັນຕໍ່ວຽກງານ, ນັບຖືການຈັດຕັ້ງ ແລະ ມີຄວາມອຸ່ນອ່ຽນທຸ່ນທ່ຽງ ອົດທົນຜ່ານຜ່າຄວາມຫຍຸ້ງຍາກ ແລະ ເຊື່ອໝັ້ນຕໍ່ການນຳພາ ຂອງພັກ ແລະ ລັດ.
- ມີແຜນຍຸດທະສາດການພັດທະນາອາຊີວະສຶກສາ ແລະ ອົບຮົມວິຊາຊີບ ທີ່ໄດ້ຮັບຮອງຈາກ ລັດຖະບານແລ້ວ ເປັນບ່ອນອີງໃນການຈັດຕັ້ງປະຕິບັດວຽກແຜນປະຕິບັດງານ ສົກຮຽນຜ່ານມາ.
- ຄະນະພັກ ແລະ ອຳນາດການປົກຄອງແຕ່ລະຂັ້ນໄດ້ໃຫ້ການຊີ້ນຳຢ່າງໃກ້ສິດ ການນຳຂອງກະຊວງສຶກສາ ທິການ ເວົ້າລວມ, ເວົ້າສະເພາະແມ່ນກົມອາຊີວະສຶກສາ ແລະ ການສຶກສາຊັ້ນສູງໄດ້ລົງໃກ້ສິດຕິດແທດ ທຸກໆໂຮງຮຽນ ໂດຍການລົງໄປຕິດຕາມ ການຮຽນ-ການສອນ ໂອ້ລົມ ພະນັກງານ, ຄູ-ອາຈານ ແລະ ນັກຮຽນທຸກໂຮງຮຽນ; ຮ່ວມພິທີການຕ່າງໆ ຊຶ່ງໄດ້ເຮັດໃຫ້ ພະນັກງານ ຄູ-ອາຈານ ມີຄວາມຫ້າວຫັນ, ອຸ່ນອ່ຽນ ແລະ ຮູ້ທິດທາງເພີ້ມເຕີມ ໃນການປະຕິບັດ ແຜນຍຸດທະສາດການພັດທະນາວຽກງານອາຊີວະສຶກສາ.
- ຫລັກສູດອາຊີວະສຶກສາແຕ່ລະລະດັບ ໄດ້ຮັບການພັດທະນາ ແລະ ຮັບການອະນຸມັດຈາກຂັ້ນເທິງ ຢ່າງຕໍ່ເນື່ອງຈາກຊັ້ນຕົ້ນເຖິງຊັ້ນສູງທັງລະບົບປົກກະຕິ, ລະບົບຕໍ່ເນື່ອງ ແລະລະບົບເຊື່ອມຕໍ່. ນອກຈາກນັ້ນວິທະຍາໄລເຕັກນິກສັບພະວິຊາໄດ້ສຳເລັດການຄົ້ນຄ້ວາຫລັກສູດລະດັບປະລິນຍາຕີຈຳນວນ ໜຶ່ງອີກ.
- ອາຄານສະຖານທີ່ ຫ້ອງຮຽນ, ໂຮງຝຶກງານ, ຫໍພັກ ແລະ ຫ້ອງການໄດ້ຮັບການກໍ່ສ້າງ ແລະ ສ້ອມແປງຄືນໃໝ່ຈຳນວນຫນຶ່ງ ສາມາດຕອບສະໜອງໄດ້ຕາມຄວາມຮຽກຮ້ອງຕ້ອງການ ອັນພື້ນຖານໄດ້.

- ພະນັກງານ, ຄູ-ອາຈານ ໄດ້ຮັບການ ຝຶກອົບຮົມດ້ານວິຊາຄູ ແລະ ວິຊາການ ຢູ່ພາຍໃນ ແລະ ຕ່າງປະເທດ.
- ແຕ່ລະພາກສ່ວນ ກໍຄືໂຮງຮຽນ ມີບົດລາຍງານ ແລະ ມີແຜນການເຄື່ອນໄຫວ ປະຈຳປີ , ພາກຮຽນ, ແຜນເດືອນ ແລະ ແຜນປະຈຳອາທິດ.
- ໂຮງຮຽນຈຳນວນຫລາຍ ມີແຫລ່ງ ລາຍຮັບ ດ້ານວິຊາການ ເພື່ອເປັນກ້ອນທຶນ ສະໜັບສະໜູນການຝຶກອົບຮົມ, ຊ່ວຍແກ້ໄຂຊີວິດການເປັນຢູ່ຂອງພະນັກງານໂດຍສະເພາະແກ້ໄຂບັນຫາເງິນເດືອນທີ່ຊັກຊ້າ,ສະ
ຫວັດດີການ ແລະ ອື່ນໆ
- ໂຮງຮຽນອາຊີວະສຶກສາຈຳນວນໜຶ່ງໄດ້ມີອົງການຈັດຕັ້ງສາກົນຕ່າງໆ ໃຫ້ການຊ່ວຍເຫຼືອ ທາງດ້ານວິຊາການ, ດ້ານວັດຖຸ, ອຸປະກອນ ການຮຽນ-ການສອນ ແລະ ພື້ນຖານໂຄງລ່າງຕ່າງໆ .

2. **<u>ດ້ານອ່ອນ ແລະ ຂໍ້ຄົງຄ້າງ</u>.**

ຄຽງຄູ່ກັບຂໍ້ສະດວກ ທີ່ກ່າວມາຂ້າງເທິງນັ້ນ, ພວກເຮົາກໍຍັງປະສົບກັບຂໍ້ຫຍຸ້ງຍາກຫຼາຍດ້ານ, ຊຶ່ງ ພໍສັງລວມໄດ້ ດັ່ງນີ້:

- ຊີວິດການເປັນຢູ່ ຂອງພະນັກງານຄູ-ອາຈານ ຍັງຝືດເຄືອງ ແລະ ເງິນເດືອນໄດ້ໜ້ອຍ ພັດຍັງຊັກຊ້າຕື່ມ ຊຶ່ງເຮັດໃຫ້ ແນວຄິດຈິດໃຈ ຂອງພະນັກງານ ຈຳນວນໜຶ່ງ ບໍ່ອຸ່ນອ່ຽນ ແລະ ຍໍ້ທໍ້ ຕໍ່ໜ້າທີ່ວຽກງານ ບາງຄົນກໍປະລະໜ້າທີ່ໂດຍພະລະການ.
- ບຸກຄະລາກອນຍັງບໍ່ທັນພຽງພໍ ກັບບໍລິມາດຂອງວຽກງານ ການພັດທະນາ ແລະ ຂະຫຍາຍວຽກງານອາຊີວະສຶກສາ.
- ບຸກຄະລາກອນຈຳນວນໜື່ງມີຄວາມຮູ້ຄວາມສາມາດດ້ານວິຊາສະເພາະ ແລະ ຄວາມຮູ້ດ້ານພາສາຕ່າງ ປະເທດຈຳກັດ ເຮັດໃຫ້ການເຄື່ອນໄຫວວຽກງານຕົວຈິງ ມີຄວາມຫຍຸ້ງຍາກໃນການເຂົ້າຮ່ວມຝຶກອົບຮົມຢູ່ຕ່າງປະເທດ ແລະ ການປະສານງານການປະຕິບັດ ໂຄງການກໍ່ພົບ ຄວາມຫຍຸ້ງຍາກ
- ການຄັດເລືອກຊັບຊ້ອນຄູໃຫມ່ເຂົ້າໃນຕຳແໜ່ງງານຕ່າງໆ ຕາມຕົວເລກແບ່ງປັນ ມີຄວາມຫຍຸ້ງຍາກເນື່ອງຈາກວ່າບາງຂະແໜງວິຊາສະເພາະ ບໍ່ມີຜູ້ສະມັກ ແລະ ບໍ່ມີວິຊາສະເພາະລະດັບຊັ້ນສູງ ໂດຍສະເພາະ ແມ່ນຢູ່ບັນດາໂຮງຮຽນ ຕ່າງແຂວງ ຍັງໄດ້ບັນຈຸ ຜູ້ຮຽນຈົບລະດັບຊັ້ນກາງເຂົ້າເປັນຄູສອນ, ຕົວເລກແບ່ງປັນຄູໄດ້ໜ້ອຍບໍ່ພຽງພໍກັບ ຄວາມຕ້ອງການ ( ໃນສົກ 2007-08 ຄວາມຕ້ອງການຄູທັງໝົດ ມີ 277 ແຕ່ໄດ້ຮັບໂຄຕ້າຕົວຈິງແຕ່ 90 ເທົ່ານັ້ນ )
- ງົບປະມານຂອງລັດ ທີ່ອະນຸມັດໃຫ້ ກົມ ແລະ ໂຮງຮຽນອາຊີວະສຶກສາຕ່າງໆ ມີຈຳກັດ, ຖອນຍາກ ແລະ ຊັກຊ້າ ຊຶ່ງເປັນສາຍເຫດໃຫ້ການປະຕິບັດກິດຈະກຳຕ່າງໆ ບໍ່ເປັນໄປຕາມແຜນການ ທີ່ກຳນົດໄວ້, ບາງໂຮງຮຽນ ບໍ່ມີງົບປະມານຈາກກະຊວງເຊັ່ນ: ໂຮງຮຽນວິຊາຊີບທີ່ສ້າງຕັ້ງຂື້ນໃໝ່ ເຊັ່ນ: ແຂວງຜົ້ງສາລີ, ຫົວພັນ, ຫລວງນ້ຳທາ ອຸດົມໄຊ, ໄຊຍະບູລີ, ບໍລິຄຳໄຊ, ອັດຕະປື, ສາລະວັນ ແລະ ແຂວງເຊກອງ...
- ຍັງບໍ່ມີລະບົບຫ້ອງສະມຸດທີ່ດີ ຊຶ່ງເຮັດໃຫ້ປື້ມຕຳລາທີ່ມີໜ້ອຍຢູ່ແລ້ວນັ້ນກະແຈກກະຈາຍ ແລະ ພົບຄວາມ ຫຍຸ້ງຍາກ ໃນການແຕ່ງບົດສອນ.

- ບາງໂຮງຮຽນມີສື່ການຮຽນ-ການສອນ ແລະ ອຸປະກອນເຕັກນິກທີ່ຮັບໃຊ້ເຂົ້າໃນວຽກງານການສິດສອນ ແລະ ຮໍ່າຮຽນ ສ່ວນຫລາຍເປັນເຄື່ອງເກົ່າແກ່ ບໍ່ມີຄຸນະພາບພຽງພໍ, ບາງໂຮງຮຽນກໍ່ບໍ່ມີເຄື່ອງມື ອຸປະກອນ ເຄື່ອງປະຈັກຕາ, ສື່ການຮຽນ-ການສອນ ແລະ ສິ່ງອໍານວຍຄວາມສະດວກຕ່າງໆ ເຊັ່ນ: ໄຟຟ້າ
- ຂາດການລົງທຶນຂອງລັດ ເພື່ອຊື້ອຸປະກອນທີ່ທັນສະໄໝມາຮັບໃຊ້ການຝຶກອົບຮົມພາກປະຕິບັດຕົວຈິງ.
- ການຊັບຊ້ອນ ແລະ ນໍາສິ່ງ ນັກຮຽນເຂົ້າຮຽນສົກຮຽນໃໝ່ຊັກຊ້າ.

## I. ແຜນງານ ຂະຫຍາຍໂອກາດເຂົ້າຮຽນ :

1. ກິດຈະກໍາ ຂະຫຍາຍໂຮງຮຽນ ອາຊີວະສຶກສາ

- ໃນສົກຮຽນ 2007-08 ສາມາດສ້າງຕັ້ງ ໂຮງຮຽນວິຊາຊີບແບບປະສົມ ຢູ່ 02 ແຂວງຄື: ແຂວງ ສາລະວັນ ແລະ ແຂວງເຊກອງ ແລະ ດໍາເນີນການຮຽນ - ການສອນ ໃນສາຂາວິຊາ ປູກຝັງ, ລ້ຽງສັດ ແລະ ກໍ່ສ້າງ ເຄຫາສະຖານ.

2. ກິດຈະກໍາ ຂະຫຍາຍ ສາຂາວິຊາຮຽນ:

ໃນໜຶ່ງສົກຮຽນຜ່ານມາໂຮງຮຽນອາຊີວະສຶກສາແຕ່ງຕ່າງໆໄດ້ຮັບອະນຸມັດຈາກຂັ້ນເທິງໃຫ້ເປີດ ຫລັກສູດ ສາຂາວິຊາຕ່າງໆ ດັ່ງນີ້ :

- ເປີດສອນຫລັກສູດ ເຕັກນິກຊັ້ນກາງ (ລະດັບ 2) ຈໍານວນ 02 ສາຂາວິຊາຄື : ໄຟຟ້າເຕັກນິກ, ວິຊາຈອດ ແລະ ທໍ່ນໍ້າ ຢູ່ໂຮງຮຽນເຕັກນິກ-ວິຊາຊີບ ແຂວງອັດຕະປື

- ເປີດສອນຫລັກສູດ ເຕັກນິກຊັ້ນກາງ (ລະດັບ 2) ສາຂາວິຊາ ສ້ອມແປງທົ່ວໄປ ຢູ່ໂຮງຮຽນ ເຕັກນິກ ວິຊາຊີບ ແຂງຄໍາມ່ວນ

- ເປີດສອນຫລັກສູດອາຊີວະສຶກສາ ລະດັບຊັ້ນສູງ ແລະ ຊັ້ນສູງຕໍ່ເນື່ອງ (11+2+1,5) ສາຂາວິຊາ ໄຟຟ້າ ເຕັກນິກ, ບໍລິການໂຮງແຮມ-ການທ່ອງທ່ຽວ, ຄອມພິວເຕີ ທຸລະກິດ, ເອເລັກໂຕຣນິກ ແລະ ກົນຈັກ ຢູ່ໃນໂຮງຮຽນອາຊີວະສຶກສາ ທີ່ມີຄວາມພ້ອມ ເຊັ່ນ: ໂຮງຮຽນ ເຕັກນິກລາວ-ເຢຍລະມັນ, ໂຮງຮຽນ ເຕັກນິກປາກປ່າສັກ, ໂຮງຮຽນ ເຕັກນິກ-ວິຊາຊີບ ແຂວງຫລວງພະບາງ, ໂຮງຮຽນເຕັກນິກ-ວິຊາຊີບ ແຂວງສະຫັວນນະເຂດ, ໂຮງຮຽນເຕັກນິກ-ວິຊາຊີບ ແຂວງຈໍາປາສັກ, ໂຮງຮຽນເຕັກນິກ ແຂວງວຽງຈັນ ແລະ ໂຮງຮຽນ ວິຊາຊີບ ມິດຕະພາບ ວຽງຈັນ-ຮ່າໂນ້ຍ.

- ສໍາເລັດການຈັດກອງປະຊຸມ ສ້າງຫລັກສູດຊັ້ນສູງ ສາຂາວິຊາໄຟຟ້ານໍ້າຕົກ ແລະ ຫລັກສູດ ປະລິນຍາຕີ ສາຂາວິຊາສໍາຫລວດແຜນທີ ແລະ ບໍລິຫານທີ່ດິນ, ຂຸດຄົ້ນ ສໍາຫລວດແຮ່, ຂຸດຄົ້ນ ປຸງແຕ່ງແຮ່ ແລະ ໄຟຟ້າຕາຂ່າຍ ແລະ ສະຖານນີ ທີ່ ວິທະຍາໄລ ເຕັກນິກ ສັບພະວິຊາ.

## II. ການຈັດຕັ້ງປະຕິບັດ ແຜນງານປັບປຸງຄຸນນະພາບ ແລະ ຄວາມສອດຄ່ອງ

1. ກິດຈະກໍາປັບປຸງ ແລະ ກໍ່ສ້າງໂຮງຮຽນ ໂຮງຮຽນ ວິຊາຊີບແບບປະສົມ :

- ເລີ້ມກໍ່ສ້າງໂຮງຮຽນວິຊາຊີບແບບປະສົມ ແຂວງຜົ້ງສາລີ, ອຸດົມໄຊ ແລະ ແຂວງຊຽງຂວາງ ແຕ່ເດືອນ 1/2008. ໂດຍການຊ່ວຍເຫຼືອຫລ້າຈາກທະນາຄານພັດທະນາເຢຍລະມັນ KFW, ມີງົບປະມານ ໄລຍະທີ 1 ທັງໝົດ 4,5 ລ້ານຢູໂຣ ຕາມສັນຍາ ຈະສໍາເລັດພາຍໃນ 15 ເດືອນ.

- ສຳເລັດການເຊັນສັນຍາ ຊ່ວຍເຫຼືອຫລ້າລະຫວ່າງ ກະຊວງສຶກສາທິການ ແລະທະນາຄານພັດທະນາເຍຍລະມັນ KFW ໃນງົບປະມານ ທັງຫມົດ 4 ລ້ານຢູໂຣ ເພື່ອປັບປຸງໂຮງຮຽນວິຊາຊີບແບບປະສົມ ແຂວງໄຊຍະບູລີ, ແຂວງຫົວພັນ ແລະຫຼວງນ້ຳທາຊຶ່ງເປັນການປະຕິບັດໂຄງການໄລຍະທີ່ 2(phase 2) ຈະໄດ້ເລີ້ມສຳຫລວດອອກແບບ ແລະ ກໍ່ສ້າງໃນທ້າຍປີ 2008.

- ສຳເລັດການສ້າງແຜນພັດທະນາໂຮງຮຽນວິຊາຊີບແບບປະສົມໄລຍະ 2 ( phase 2 ) ໂດຍການສະໜັບ ສະໜູນຈາກໂຄງການ HRD-ME

- ປັບປຸງຂະຫຍາຍໂຮງຮຽນເຕັກນິກ-ວິຊາຊີບ ແຂວງບໍ່ແກ້ວໂດຍການຊ່ວຍເຫຼືອຫລ້າຈາກລັດຖະບານ ສສ.ຫວຽດນາມ ຊຶ່ງມີມູນຄ່າການກໍ່ສ້າງທັງໝົດ 10 ຕື້ດົງ ເຖິງປະຈຸບັນໄດ້ເລີ້ມຕົ້ນລົງມືກໍ່ສ້າງ ແລ້ວ.

2. <u>ກິດຈະກຳ ປັບປຸງໂຮງຮຽນເຕັກນິກ-ວິຊາຊີບ</u> :

- ສືບຕໍ່ປະຕິບັດໂຄງການປັບປຸງ ໂຮງຮຽນເຕັກນິກ-ວິຊາຊີບ ແຂວງຄຳມ່ວນ ຮ່ວມມື ລາວ-ລຸກຊຳບວກ ມູນຄ່າ 3.3 ລ້ານຢູໂລ ເລີ້ມຕົ້ນປະຕິບັດກິດຈະກຳຕ່າງໆ ແຕ່ປີ 2002 ແລະ ຈະສິ້ນສຸດໂຄງການໃນ ທ້າຍ ປີ 2008

- ສືບຕໍ່ປະຕິບັດໂຄງການປັບປຸງໂຮງຮຽນເຕັກນິກ-ວິຊາຊີບແຂວງຈຳປາສັກ ຮ່ວມມືລາວ-ແບນຊິກ (BTC ) ໄດ້ສຳເລັດ ກິດຈະກຳຕ່າງໆ ຈະສິ້ນສຸດໂຄງການໃນຕົ້ນ ປີ 2009.

- ໂຄງການພັດທະນາຊົນນະບົດຮອບດ້ານ ແຂວງບໍລິຄຳໄຊ (LuxDevelopment - LAO/014) ໄດ້ໃຫ້ ການສະໜັບສະໜູນງົບປະມານ 57.058,38 ໂດລາສະຫະລັດ ເພື່ອກໍ່ສ້າງຫໍພັກນັກງານຍິງ, ຫ້ອງນ້ຳ ແລະ ເຮືອນຄົວໃຫ້ໂຮງຮຽນ ເຕັກນິກ-ວິຊາຊີບ ແຂວງບໍລິຄຳໄຊ ປະຈຸບັນການກໍ່ສ້າງ ໄດ້ສຳເລັດແລ້ວ 40% ຂອງໜ້າວຽກ.

3. <u>ກິດຈະກຳ ຍົກລະດັບ ໂຮງຮຽນເຕັກ-ວິຊາຊີບ ເປັນວິທະຍາໄລ</u> :

- ສຳເລັດສຶກສາຄົ້ນຄວ້າສ້າງໂຄງການຍົກລະດັບ ໂຮງຮຽນເຕັກນິກ-ວິຊາຊີບ ແຂວງສະຫວັນນະເຂດ ເປັນ ວິທະຍາໄລ ເຕັກນິກ ໂດຍຮ່ວມມືກັບຣາຊະອານາຈັກໄທ , ຊຶ່ງ ມີທັງຫມົດ 5 ແຜນກິດຈະກຳ ຄື: (1) ການພັດທະນາບຸກຄະລາກອນ, (2) ການພັດທະນາຫຼັກສູດ, (3) ການປັບປຸງຫ້ອງຝຶກງານ, ການປະກອບ ອຸປະກອນເຕັກນິກ, (5) ການວັດຜົນ ແລະ ປະເມີນຜົນ ເລີ້ມຕົ້ນແຕ່ທ້າຍປີ 2007 ເປັນຕົ້ນມາ ແລະ ໃຫ້ສຳເລັດພາຍໃນປີ 2010.

4. <u>ກິດຈະກຳ ການພັດທະນາຫລັກສູດ ແລະ ສື່ການຮຽນ-ການສອນ</u>

- ສຳເລັດການປັບປຸງຫລັກສູດ ສ້າງຄູອາຊີວະສຶກສາຊັ້ນສູງ ຈຳນວນ 5 ສາຂາວິຊາ, ປະຈຸບັນຢູ່ໃນຂັ້ນຕອນ ຂໍອະນຸມັດນຳໃຊ້

- ສຳເລັດການລົງ ເກັບກຳຂໍ້ມູນການຈັດຕັ້ງປະຕິບັດຫລັກສູດ ໃນໂຮງຮຽນອາຊີວະສຶກສາທົ່ວປະເທດ

- ມີຂໍ້ຕົກລົງອະນຸມັດນຳໃຊ້ຫລັກສູດ ໃຫ້ແກ່ສະຖາບັນຝຶກອົບຮົມ ວິຊາກົດໝາຍ ແລະ ວຽກງານຍຸດຕິທຳ ສາຂາວິຊາກົດໝາຍ ຊັ້ນກາງ.

- ສູນພັດທະນາອາຊີວະສຶກສາ ໄດ້ສຳເລັດການ ສຳເນົາ ປື້ມຕຳລາ ຮັບໃຊ້ການຮຽນ-ການສອນຈຳນວນ 16 ວິຊາ ( 380 ຫົວ )

- ໄດ້ສຳເລັດ ການຄົ້ນຄ້ວາຮຽບຮຽງ ປຶ້ມຕຳລາ ຈຳນວນ 1 ວິຊາ ແລະ ກຳລັງຄົ້ນຄ້ວາຮຽບຮຽງປຶ້ມຕຳລາ ຮັບໃຊ້ການຮຽນ-ການສອນ ຈຳນວນ 9 ວິຊາ.

- ກຳລັງຂໍອະນຸມັດນຳໃຊ້ ຫລັກສູດ ຊັ້ນສູງ ສາຂາວິຊາເຕັກໂນໂລຊີຂໍ້ມູນຂ່າວສານ ໃຫ້ໂຮງຮຽນວິຊາຊີບ ມິດຕະພາບ ວຽງຈັນ-ຮ່າໂນ້ຍ.

5. <u>ກິດຈະກຳ ກໍ່ສ້າງ ແລະ ຝຶກອົບຮົມຄູ</u> :

- ຝຶກອົບຮົມຄູສອນອາຊີວະສຶກສາທີ່ບໍ່ໄດ້ຮຽນວິຊາຄູມາກ່ອນໄດ້ 130 ເທື່ອຄົນ ໂດຍການສະໜັບສະໜູນ ຈາກໂຄງການ HRD-ME.( ໃນງົບປະມານ 16,043.28 $ )

- ກໍ່ສ້າງຄູອາຊີວະສຶກສາ ລະດັບປະລິນຍາຕີ ທີ່ຄະນະວິສາວະກຳສາດ ມີນັກສຶກສາທີ່ ເປັນນັກຮຽນ ແລະ ພະນັກງານຄູ ກຳລັງສຶກສາໃນສາຂາວິຊາໄຟຟ້າ, ເອກເລັກໂຕຼນິກ, ກໍ່ສ້າງ, ຈັກກົນ ແລະ ຊົນລະປະທານ ຈຳນວນ 98 ຄົນ ແລະ ຈະສຳເລັດການ ສຶກສາໃນປີ 2008 ນີ້ຈຳນວນ 22 ຄົນ.

- ໃນສົກຮຽນປີ 2007-2008 ໄດ້ສົ່ງພະນັກງານຄູຈຳນວນໜຶ່ງໄປຍົກລະດັບຄວາມຮູ້ ຄວາມສາມາດ ດ້ານ ວິຊາການ ຢູ່ຕ່າງປະເທດໂດຍການສະໜັບສະໜູນຈາກອົງການຈັດຕັ້ງສາກົນ ເຊັ່ນ : ອົງການ SEAMEO VOCTECH ຈຳນວນ 10 ຄົນ, ອົງການ Francophonie ຈຳນວນ 16 ຄົນ, ອົງການ KOICA ຈຳນວນ 20 ຄົນ , ອົງການ AOTS ຈຳນວນ 14 ຄົນ ແລະ ໄດ້ສົ່ງພະນັກງານຄູ ໄປຮຽນຕໍ່ທີ່ມະຫາວິທະຍາໄລ ອຸດສາຫະກຳ ໄຮ່ຈີ່ມິນ ຈຳນວນທັງໝົດ 9 ຄົນ.

- ຝຶກອົບຮົມຫົວຂໍ້ ການສຶກສາທາງສື່ເອເລັກໂຕຼນິກ E-learning ມີຜູ້ເຂົ້າຮ່ວມທັງຫມົດ 8 ຄົນ ໂດຍການ ສະຫນັບສະຫນູນ ຈາກໂຄງການ HRD-ME ( ງົບປະມານ 20,371.98 $ )

6. <u>ກິດຈະກຳ ການຝຶກອົບຮົມຮ່ວມພາກລັດ ແລະ ເອກະຊົນ</u> :

- ຫ້ອງການ NTC-PO ສາມາດຈັດການ ຝຶກອົບຮົມຮ່ວມກັບສະມາຄົມເຟີນີເຈີ້ ແລະ ຕົກແຕ່ງພາຍໃນ ໄດ້ 3 ຄັ້ງ ມີຜູ້ເຂົ້າຮ່ວມ ທັງຫມົດ 63 ເທື່ອຄົນ ແລະ ກັບສາມາຄົມໂຮງແຮມ ແລະ ຮ້ານອາຫານໄດ້ 1 ຄັ້ງມີຜູ້ເຂົ້າຮ່ວມທັງຫມົດ 54 ເທື່ອຄົນ, ສຳເລັດການສ້າງຕັ້ງກຸ່ມອາຊີບການພິມ ແລະ ກຸ່ມອາຊີບກໍ່ສ້າງ.

- ສູນພັດທະນາຜູ້ປະກອບກິດຈະການ ລາວ-ອິນເດຍ ໄດ້ຈັດຕັ້ງການຝຶກ ອົບຮົມໃຫ້ ນັກທຸລະກິດ, ພະນັກງານ ແລະ ນັກຮຽນ ພາຍໃນນະຄອນຫລວງ ແລະ ຕ່າງແຂວງ ລວມ 37 ຄັ້ງ ມີຜູ້ເຂົ້າຮ່ວມ ຈຳນວນ 867 ເທື່ອຄົນ.

## III ການຈັດຕັ້ງປະຕິບັດ ແຜນງານບໍລິຫານ ແລະ ຄຸ້ມຄອງການສຶກສາ.

1 <u>ກິດຈະກຳ ລົງຕິດຕາມ ແລະ ຊຸກຍູ້ການຮຽນ-ການສອນ</u>

- ຄະນະນຳຂອງກົມໄດ້ລົງ ຕິດຕາມການຈັດຕັ້ງປະຕິບັດ ການຮຽນ-ການສອນ ແລະ ພົບປະໂອລົມ ຄູອາຈານ ໂຮງຮຽນອາຊີວະສຶກສາ ໃນນະຄອນຫລວງວຽງຈັນ ແລະ ຕ່າງແຂວງຈຳນວນໜຶ່ງ.

2 <u>ກິດຈະກຳ ດ້ານນິຕິກຳ</u>

- ສຳເລັດການສ້າງແຜນແມ່ບົດ ແລະ ແຜນກິດຈະກຳຈັດຕັ້ງປະຕິບັດແຜນພັດທະນາອາຊີວະສຶກສາ ແລະ ອົບຮົມວິຊາຊີບ ແຕ່ນີ້ຮອດປີ 2015 ຊຶ່ງມີໜ້າວຽກທັງໝົດ 123 ກິດຈະກຳ ເປັນມູນຄ່າເກືອບ 10 ລ້ານ$.

- ສຳເລັດການປັບປຸງດຳລັດ ນາຍົກລັດຖະມົນຕີ ວ່າດ້ວຍການພັດທະນາ ອາຊີວະສຶກສາ ແລະ ອົບຮົມ ວິຊາຊີບ.

3. ກິດຈະກຳ ຮ່ວມມືກັບຕ່າງປະເທດ.

- ຮ່ວມມືກັບໂຄງການ HRD-ME ສະໜອງອຸປະກອນການຮຽນ-ການສອນ, ຫລັກສູດ, ຕຳລາຮຽນ ແລະ ສິ່ງອຳນວຍຄວາມສະດວກເພື່ອຮັບໃຊ້ໃຫ້ແກ່ໂຮງຮຽນວິຊາຊີບແບບປະສົມໃນມູນຄ່າລວມ 70,399.77 $.

- ຮ່ວມມືກັບ ອົງການພັດທະນາເຍຍລະມັນ DED ປະກອບນັກພັດທະນາກອນ ເຍຍລະມັນ ໃຫ້ແກ່ສະຖານ ອາຊີວະສຶກສາແຫ່ງຕ່າງໆ ຈຳນວນ 09 ທ່ານ ຄື: ສູນພັດທະນາອາຊີວິສຶກສາ 1 ທ່ານ, ໂຮງຮຽນເຕັກນິກວິຊາຊີບ ປາກເຊ 1 ທ່ານ, ໂຮງຮຽນເຕັກນິກ-ວິຊາຊີບ ແຂວງຄຳມ່ວນ 2 ທ່ານ, ໂຮງຮຽນ ວິຊາຊີບແບບປະສົມ ອຸດົມໄຊ, ຜົ້ງສາລີ, ຊຽງຂວາງ, ສະມາຄົມເຟີນີເຈີ ແລະ ສະມາຄົມ ອາຫານ-ໂຮງແຮມ ບ່ອນລະ 1 ທ່ານ.

- ຮ່ວມມືກັບອົງການ Lux Development ປັບປຸງໂຮງຮຽນວິຊາຊີບ ແຂວງ ຄຳມ່ວນ ສຳເລັດ ການກໍ່ສ້າງໂຮງຊ່າງ ສາຂາວິຊາ ສ້ອມແປງທົ່ວໄປ.

- ຮ່ວມມືກັບເຄືອຂ່າຍປະກັນຄຸນນະພາບ ອາຊີ-ປາຊີຟິກ APQN ຈັດກອງປະຊຸມກ່ຽວກັບ ຄຸນນະພາບ ການສຶກສາ ຢູ່ໃນລາວ.

- ໂຄງການ ອຳນວຍ ຄວາມສະດວກດ້ານການຝຶກອົບຮົມວິຊາຊີບ Training Facility (BTC) ປະເທດ ແບນຊິກ ໄດ້ຊ່ວຍເຫລືອສະຖານອາຊີວະສຶກສາຈຳນວນ 18 ໂຄງການ ລວມມູນຄ່າການ ຊ່ວຍເຫລືອ 45.967 $ ເພື່ອຝຶກອົບຮົມໃຫ້ກຸ່ມເປົ້າໝາຍ.

- ຮ່ວມມືກັບມູນນິທິ YMCA (ມູນນິທິເພື່ອການພັດທະນາພາກຕາເວັນອອກສ່ຽງເໜືອປະເທດໄທ) ເພື່ອສົ່ງ ຄູອາຈານ ແລະ ນັກຮຽນໂຮງຮຽນເຕັກນິກວິຊາຊີບ ເຂົ້າຮ່ວມກິດຈະກຳຄ້າຍພັດທະນາຊາວ ໜຸ່ມ ທີ່ ຊຽງໃໝ່ ປະເທດໄທ ຈຳນວນ 5 ຄົນ.

- ຮ່ວມມືກັບອົງການ BTC ເພື່ອຈັດຕັ້ງປະຕິບັດໂຄງການປັບປຸງໂຮງຮຽນເຕັກນິກ-ວິຊາຊີບ ແຂວງ ຈຳປາສັກ ແຕ່ 2005-07 ໃນງົບປະມານ 1,75 ລ້ານ Euro ໃຫ້ສຳເລັດໃນຕົ້ນປີ 2009

- ຮ່ວມມືກັບ ທະນາຄານພັດທະນາ ເຍຍລະມັນ kfw ໃນການຈັດຕັ້ງປະຕິບັດໂຄງການ ກໍ່ສ້າງ ໂຮງຮຽນ ວິຊາຊີບແບບປະສົມ ພາກເໜືອ ແຜນງານ Phase 1 ( ທີ່ແຂວງ ຜົ້ງສາລີ, ອຸດົມໄຊ ແລະ ຊຽງຂວາງ ) ຕາມສັນຍາສຳເລັດການກໍ່ສ້າງ 15 ເດືອນ ເປັນມູນຄ່າ 4,5 ລ້ານ$ ແລະ ຈະໄດ້ ເລີ້ມດຳເນີນການສຳຫລວດ ອອກແບບ ແລະ ກໍ່ສ້າງ ແຜນງານ Phase 2 ( ທີ່ແຂວງ ໄຊຍະບູລີ, ຫລວງນ້ຳທາ ແລະ ຫົວພັນ ) ໃນທ້າຍປີ 2008 ເປັນມູນຄ່າທັງໝົດ 4 ລ້ານ$.

- ຮ່ວມມືກັບ ສູນ SEAMEO VOCTECH ຈັດການຝຶກອົບຮົມໃຫ້ແກ່ຜູ້ບໍລິຫານ ໂຮງຮຽນອາຊີວະສຶກສາພາກລັດ ແລະ ເອກະຊົນໃນຫົວຂໍ້ "ການຄຸ້ມຄອງການປ່ຽນແປງວຽກງານ ອາຊີວະສຶກສາ" ມີຜູ້ເຂົ້າຮ່ວມທັງຫມົດ 34 ທ່ານ.

- ໄດ້ຮັບການສະໜັບສະໜູນ ຈາກອົງການJODC, Japan ຈັດຝຶກອົບຮົມໃນຫົວຂໍ້" ປັບປຸງການຂະ ຫຍາຍດ້ານທຸລະກິດໂດຍຜານລະບົບຂົນສົ່ງ"ທີ່ສູນພັດທະນາອາຊີວະສຶກສາມີຜູ້ເຂົ້າຮ່ວມ 40 ເທື່ອຄົນ.

- ສົ່ງຄູອາຈານ ແລະ ນັກຮຽນ ໂຮງຮຽນເຕັກນິກ ປາກປ່າສັກ, ແຂວງວຽງຈັນ, ເຕັກນິກ-ວິຊາຊີບແຂວງຈໍາປາສັກ ແລະ ໂຮງຮຽນວິຊາຊີບ ແບບປະສົມແຂວງໄຊຍະບູລີ ຈໍານວນ 46 ເທື່ອຄົນ ເຂົ້າຮ່ວມຝຶກອົບຮົມ ຕາມແຂວງຊາຍແດນ ລາວ-ໄທ ໃນຫົວຂໍ້ "ການຄ້າຊາຍແດນ" ໂດຍການສະໜັບສະໜູນຂອງຄະນະ ກໍາມະການ ອາຊີວະສຶກສາ ປະເທດໄທ

- ອົງການອິດສະເອດ ປະເທດ ອິດສະຕາລີ ໄດ້ໃຫ້ການຊ່ວຍເຫລືອ ຄອມພິວເຕີມືສອງ ຈໍານວນ 60 ເຄື່ອງ ໃຫ້ແກ່ ວິທະຍາໄລ ເຕັກນິກ ສັບພະວິຊາ.

- ຮ່ວມມືກັບອົງການ NPO Reborn Kyoto ຈັດຕັ້ງການຝຶກອົບຮົມ ວິຊາຕັດຫຍິບ ທີ່ໂຮງຮຽນເຕັກນິກ-ວິຊາຊີບ ແຂວງສະຫວັນນະເຂດ ໃຫ້ແກ່ກຸ່ມເປົ້າໝາຍ ໄດ້ 1 ຄັ້ງ ມີຜູ້ເຂົ້າຮ່ວມ ຈໍານວນ 15 ຄົນ ໃນມູນຄ່າ 15.000 $

## VI ບົດຮຽນທີ່ຖອດຖອນໄດ້ :

1. ສົ່ງເສີມແບບແຜນ-ວິທີເຮັດວຽກ ແບບລວມສູນປະຊາທິປະໄຕ, ເປັນໝູ່ຄະນະ ບຸກຄົນຮັບຜິດຊອບ.
2. ເອົາໃຈໃສ່ ສຶກສາອົບຮົມແນວຄິດ - ການເມືອງ ໃຫ້ພະນັກງານ, ຄູອາຈານ ແລະ ນັກຮຽນດ້ວຍຫລາຍ

   ຮູບການ ທັງຢູ່ໃນ ແລະ ນອກໂຮງຮຽນ ແລະ ນະໂຍບາຍຕໍ່ພະນັກງານ,ຄູອາຈານໃຫ້ເໝາະສົມ.
3. ຄວນປັບປຸງ ລະບົບການຈັດຕັ້ງ ໃຫ້ແທດເໝາະ ກັບບໍລິມາດຂອງວຽກງານ ທີ່ຄຸ້ມຄອງໃນແຕ່ລະຂັ້ນແຕ່ສູນກາງລົງຮອດທ້ອງຖິ່ນແລະສ້າງພະນັກງານສືບທອດແລະ ພະນັກງງານຫລັກແຫລ່ງເຂົ້າໃນແຕ່ລະ ຕໍາແໜ່ງງານ ເພື່ອຮັບປະກັນວຽກງານໃຫ້ມີຜົນສໍາເລັດ.
4. ການລົງຕິດຕາມ ແລະ ຊຸກຍູ້ ການຈັດຕັ້ງປະຕິບັດ ການຮຽນ-ການສອນ ໃນໂຮງຮຽນເປັນວຽກງານປົກກະຕິ ແລະ ສໍາຄັນ ທີ່ຂາດບໍ່ໄດ້.
5. ການຍາດແຍ່ງການຊ່ວຍເຫລືອດ້ານການເງິນ ເພື່ອພັດທະນາອາຊີວະສຶກສາ ແລະ ອົບຮົມວິຊາຊີບຈາກພາຍໃນ ແລະ ອົງການຈັດຕັ້ງສາກົນ ແມ່ນຄວາມຈໍາເປັນ ແລະ ຮີບດ່ວນ ເພື່ອບັນ ລຸກິດຈະກໍາຕ່າງໆ ໃນຂອບເຂດແຜນແມ່ບົດ ການພັດທະນາອາຊີວະສຶກສາ ແລະ ອົບຮົມວິຊາຊີບ.

## VII ຂໍ້ສະເໜີ.

1. ສະເໜີພິຈາລະນາລົງທຶນໃນສາຍອາຊີວະສຶກສາເພີ້ມຂຶ້ນ ແລະ ສະເໜີຂໍກູ້ຢືມທຶນ ຈາກຕ່າງປະເທດຄືກັບ ສາຍ ຊັ້ນສູງ ແລະ ມະຫາວິທະຍາໄລເພື່ອລົງທຶນໃນສາຍອາຊີວະສຶກສາ.
2. ສະເໜີພິຈາລະນາເພີ້ມງົບປະມານ ຮັບໃຊ້ວິຊາການ ໃຫ້ໂຮງຮຽນ ອາຊີວະສຶກສາ ຕ່າງໆ.
3. ກໍານົດໂກຕາ ແລະ ຕົວເລກສໍາລັບຄູສອນສາຍອາຊີວະສຶກສາເພີ້ມຂຶ້ນ.
4. ພິຈາລະນາ ມາດຕະການ ແລະ ຍຸດທະສາດແຫ່ງຊາດເພື່ອກໍ່ສ້າງກໍາລັງແຮງງານ ໃຫ້ມີລັກສະນະຮູບທາດ, ສົ່ງເສີມ ໃຫ້ຄົນ ມາຮຽນຊັ້ນຕົ້ນຫລາຍ ແລະ ຮຽນຊັ້ນກາງ, ຊັ້ນສູງ, ປະລິນຍາຕີ ຫນ້ອຍລົງຕາມລໍາດັບ
5. ສະເໜີປັບປຸງພາລະບົດບາດຂອງໂຮງຮຽນອາຊີວະສຶກສາຊັ້ນກາງໃຫ້ມີວິທະຍາຖານະຮັບຮອງປະກາສະນິຍະບັດ ຊັ້ນສູງໄດ້.
6. ສະເໜີໃຫ້ຈັດສົ່ງນັກຮຽນເຂົ້າໃຫມ່ ແລະ ເປີດສົກຮຽນຕາມກໍານົດເວລາ.

7. ໃຫ້ກະຊວງສຶກສາທິການພິຈາລະນາຂຶ້ນແຜນ ແລະ ຕິດຕາມງົບປະມານທຶນສຶບທຶບໂຄງການໃຫ້ແກ່ໂຄງການ ຕ່າງໆຕາມພັນທະທີ່ກຳນົດໄວ້ໃນສັນຍາຮ່ວມມືກັບຕ່າງປະເທດ.

**ຫົວໜ້າກົມ,**

**(ເຊັນ ແລະ ປະທັບຕາ)**

**ຮສ. ດຣ. ກອງສີ ແສງມະນີ**